# ວິທີການປູກມັນຕົ້ນ

ມັນຕົ້ນເປັນພືດໃຫ້ຫົວທີ່ມີທາດແປ້ງສູງບັນຈຸຢູ່ໃນຫົວ ແລະ ທາດໂປຼຕີນສູງບັນຈຸຢູ່ໃນໃບ ເໝາະສຳລັບນຳໃຊ້ລ້ຽງສັດ ແລະ ຍັງໃຊ້ກິນແທນເຂົ້າໄດ້ໃນເວລາຄົນເຮົາບໍ່ມີເຂົ້າກິນພຽງພໍ

**ສາຍພັນມັນຕົ້ນທີ່ປູກຢູ່ລາວມີຫຼາຍ:**

- ສາຍພັນຕ່າງໆທີ່ຍອດ ແລະ ກ້ານສີຂຽວ
- ສາຍພັນຕ່າງໆທີ່ຍອດ ແລະ ກ້ານສີແດງ

**ລະດູການປູກ**

ລະດູປູກທີ່ເໝາະສົມແມ່ນຕົ້ນລະດູຝົນ (ເດືອນ 5 ເດືອນ 6 ລາວ)

**ການກຽມດິນ**

ໄຖ ແລະ ຄາດດິນເລິກປະມານ 20-30 ຊມ

## ມັນຕົ້ນປູກໄດ້ 3 ແບບຄື

**ປູກຕັ້ງ, ປູກເນີ້ງ ແລະ ປູກນອນ**











**ທ່ອນພັນ:** ທ່ອນພັນທີ່ເໝາະສົມມີອາຍຸ 8-10 ເດືອນ, ບໍ່ມີພະຍາດ ແລະ ແມງໄມ້ທຳລາຍ.

**ເກັບຮັກສາ:** ທ່ອນພັນຈະປູກຍາວ 20 ຊມ ແລະ ມີ 5 ຕາຂຶ້ນໄປ, ເກັບຮັກສາບໍ່ເກີນ 3 ວັນ; ຍາວ 40 ຊມ, ເກັບຮັກສາບໍ່ເກີນ 7 ວັນ. ຖ້າຈະເກັບໄວ້ດົນຕ້ອງຮັກສາເປັນລຳຕົ້ນ ມັດຕັ້ງໄວ້ກ້ອງຕົ້ນໄມ້ ຫຼື ບ່ອນຮົ່ມ

**ປູກຕັ້ງ** ແລະ **ປູກເນີ້ງ:** ຕ້ອງປັກທ່ອນພັນລົງດິນ 15 ຊມ ຫຼື 2 ສ່ວນລົງໃນດິນ 1 ສ່ວນເຫຼືອຢູ່ໜ້າດິນ ແລະ ປີ່ນຕາ ຂຶ້ນເທິງ

**ປູກນອນ:** ປູກເລິກປະມານ 5 ຊມ. ລະວັງບໍ່ຄວນໃສ່ປຸ໋ຍ ຫຼື ຝຸ່ນຄອກ ດິບໃນເວລາຫາກໍ່ປູກ ເພາະວ່າ ເບິ່ງບໍ່ເຫັນທ່ອນພັນ, ຖ້າໃສ່ໄດ້ໃກ້ ຫຼາຍທ່ອນພັນຈະເນົ່າ

**ໄລຍະປູກ:** ປູກໄລຍະຫ່າງ 1x1 ແມັດ. ຖ້າປູກເອົາໃບແມ່ນ 30x30 ຊມ, 30x40 ຊມ ຫຼື 60x60 ຊມ ...

**ດິນບໍ່ດີ:** ຖ້າດິນບໍ່ດີຕ້ອງໃສ່ຝຸ່ນຄອກ ແລະ ປຸ໋ຍເຄມີເພື່ອປັບປຸງຄວາມອຸດົມສົມບູນຂອງດິນໃຫ້ດີຂຶ້ນ

**ວິທີໃສ່ຝຸ່ນ ແລະ ປຸ໋ຍ:**

**ຝຸ່ນຄອກ:** ໂຮຍໃສ່ພື້ນທີ່ຈະປູກມັນຕົ້ນໃນອັດຕາ 5-8 ໂຕນ/ເຮັກຕາກ່ອນຄາດ

**ປຸ໋ຍເຄມີ:** ຫຼັງຈາກປູກແລ້ວໃຊ້ຈົກຂຸດຢູ່ຂ້າງ ຫ່າງຈາກຕົ້ນປະມານ 5-8 ຊມ ແລ້ວເອົາປຸ໋ຍໃສ່ ແລະ ຖົມດິນຄືນ. ໃສ່ໃນອັດຕາ 200-300 ກິໂລ/ເຮັກຕາ (ສູດ: 15-15-15) ຕາມຄວາມເໝາະສົມຂອງດິນ. ໂດຍແບ່ງໃສ່ 2 ຄັ້ງເທົ່າກັນຄື: ຫຼັງຈາກປູກໄດ້ 1 ເດືອນໃສ່ຄັ້ງທີ່ 1 ແລະ 3 ເດືອນໃສ່ຄັ້ງທີ່ 2

**ການບົວລະບັດຮັກສາ:** ຫຼັງຈາກປູກແລ້ວຕ້ອງໄດ້ເສຍຫຍ້າ ເພື່ອໃຫ້ມັນຕົ້ນໃຫ່ຍໄວ ຜົນຜະລິດຈິ່ງສູງ

**ຂໍ້ມູນເພີ້ມ:** ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້
ສູນຄົ້ນຄວ້າກະສິກຳເຂດຮ້ອນສາກົນ (CIAT)
ຕູ້ ປ.ນ 783, ວຽງຈັນ ໂທ: (+856 21) 770 090
E-mail: CIAT-ASIA@cgiar.org